ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານ ແຫ່ງ ສປປ ລາວ

ກົມຄຸ້ມຄອງທະນາຄານທຸລະກິດ

ເລກທີ 19 /ກຄທ

ນະຄອນຫຼວງວຽງຈັນ, ວັນທີ 13 ມັງກອນ 2022

# ແຈ້ງການ

## ກ່ຽວກັບການຮັບຮອງການແຕ່ງຕັ້ງ ຫຼື ປົດຕຳແໜ່ງຜູ້ບໍລິຫານຂອງທະນາຄານທຸລະກິດ

- ອີງຕາມກົດໝາຍວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ) ສະບັບເລກທີ 56/ສພຊ, ລົງວັນທີ 07 ທັນວາ 2018;
- ອີງຕາມຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມຄຸ້ມຄອງທະນາຄານທຸລະກິດ ສະບັບເລກທີ 955/ທຫລ, ລົງວັນທີ 07 ພະຈິກ 2013.

ເພື່ອຮັບປະກັນການຈັດຕັ້ງປະຕິບັດ ກ່ຽວກັບການຮັບຮອງການແຕ່ງຕັ້ງ ຫຼື ປົດຕຳແໜ່ງຜູ້ບໍລິຫານຂອງທະນາຄານທຸລະກິດ ຕາມທີ່ກຳນົດໄວ້ໃນ ມາດຕາ 31 ຂອງກົດໝາຍວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ) ສະບັບເລກທີ 56/ສພຊ, ລົງວັນທີ 07 ທັນວາ 2018, ກົມຄຸ້ມຄອງທະນາຄານທຸລະກິດ (ກຄທ) ທະນາຄານແຫ່ງ ສປປ ລາວ (ທຫລ) ອອກຄຳແນະນຳປະຕິບັດ ດັ່ງນີ້:

1. ໃນການຂໍຮັບຮອງການແຕ່ງຕັ້ງ ຫຼື ປົດຕຳແໜ່ງຜູ້ບໍລິຫານຂອງທະນາຄານທຸລະກິດ ຈາກ ທຫລ, ໃຫ້ປະກອບເອກະສານຂໍຮັບຮອງ ຄືກັນກັບ ຜູ້ບໍລິຫານສ້າງຕັ້ງ ທີ່ກຳນົດໄວ້ໃນ ຂໍ້ຕົກລົງວ່າດ້ວຍການຂໍອະນຸຍາດດຳເນີນທຸລະກິດການທະນາຄານ ທີ່ ທຫລ ອອກໃນແຕ່ລະໄລຍະ ແລ້ວຍື່ນມາຍັງ ກຄທ, ລາຍການເອກະສານທີ່ຕ້ອງປະກອບໄດ້ຄັດຕິດມາພ້ອມນີ້;
2. ການແຕ່ງຕັ້ງ ຫຼື ປົດຕຳແໜ່ງດັ່ງກ່າວ ຈະມີຜົນສັກສິດພາຍຫຼັງການຮັບຮອງຂອງ ທຫລ ເທົ່ານັ້ນ. ການແຕ່ງຕັ້ງຫຼື ປົດຕຳແໜ່ງກ່ອນການຮັບຮອງຂອງ ທຫລ ຈະຖືເປັນການລະເມີດກົດໝາຍວ່າດ້ວຍທະນາຄານທຸລະກິດ ແລະ ຈະຖືກປະຕິບັດມາດຕະການ ຕາມລະບຽບການທີ່ ທຫລ ວາງອອກໃນແຕ່ລະໄລຍະ;
3. ໃຫ້ທະນາຄານທຸລະກິດ ລາຍງານການຕິດຕາມເງື່ອນໄຂຂອງຜູ້ບໍລິຫານ ທັນທີເມື່ອມີການປ່ຽນແປງ ຫຼື ປີລະຄັ້ງ ຕາມແບບພິມທີ່ຄັດຕິດມາພ້ອມນີ້;
4. ສຳລັບອາຍຸການຂອງສະມາຊິກສະພາບໍລິຫານ ແລະ ຜູ້ອຳນວຍການ ລວມທັງໝົດແມ່ນບໍ່ໃຫ້ເກີນ 12 (ສິບສອງ) ປີ. ສຳລັບສະມາຊິກສະພາບໍລິຫານ ແລະ ຜູ້ອຳນວຍການທີ່ໄດ້ດຳລົງຕຳແໜ່ງເດີມກ່ອນການປັບປຸງກົດໝາຍວ່າດ້ວຍທະນາຄານທຸລະກິດ ແມ່ນໃຫ້ນັບລວມທັງໝົດ ບໍ່ໃຫ້ເກີນ 12 (ສິບສອງ) ປີ ເຊັ່ນກັນ (ນັບທັງກ່ອນ ແລະ ຫຼັງການປັບປຸງກົດໝາຍວ່າດ້ວຍທະນາຄານທຸລະກິດ).

5. ພາຍຫຼັງທີ່ໄດ້ຮັບເອກະສານຄົບຖ້ວນຂ້າງເທິງ, ທຫລ ຈະພິຈາລະນາອະນຸຍາດ ຫຼື ຮັບຮອງ ພາຍໃນ 15 (ສິບຫ້າ) ວັນລັດຖະການ. ໃນກໍລະນີປະຕິເສດ ຫຼື ຕ້ອງໃຊ້ເວລາເພີ່ມໃນການພິຈາລະນາ, ກຄທ ຈະເຮັດໜັງສືແຈ້ງໃຫ້ທະນາຄານຊາບ.

ດັ່ງນັ້ນ, ຈຶ່ງອອກຄຳແນະນຳສະບັບນີ້ ມາຍັງທ່ານ ເພື່ອຈັດຕັ້ງປະຕິບັດໃຫ້ສອດຄ່ອງ.

**ຫົວໜ້າກົມ**

**ອາລຸນ ບຸນຍົງ**

<u>**ໝາຍເຫດ**</u>: ເອກະສານຄັດຕິດ:

1) ລາຍການເອກະສານປະກອບຂໍຮັບຮອງການແຕ່ງຕັ້ງ ຫຼື ການປົດຕຳແໜ່ງຜູ້ບໍລິຫານ
2) ແບບພິມລາຍງານການຕິດຕາມເງື່ອນໄຂຂອງຜູ້ບໍລິຫານ

❖ **ເອກະສານຄັດຕິດ 1: ລາຍການເອກະສານປະກອບການຮັບຮອງການແຕ່ງຕັ້ງ ຫຼື ການປົດຕຳແໜ່ງຜູ້ບໍລິຫານ**

I. **ການແຕ່ງຕັ້ງ**

- ☐ ຄຳຮ້ອງສະເໜີຂໍຮັບຮອງການແຕ່ງຕັ້ງ ຕາມແບບພິມທີ່ ທະນາຄານແຫ່ງ ສປປ ລາວ ກຳນົດອອກ;
- ☐ ສຳເນົາມະຕິ ຫຼື ຂໍ້ຕົກລົງແຕ່ງຕັ້ງ;
- ☐ ຊີວະປະຫວັດຕາມແບບພິມທີ່ ທະນາຄານແຫ່ງ ສປປ ລາວ ກຳນົດອອກ;
- ☐ ເອກະສານຢັ້ງຢືນຄຸນວຸດທິ;
- ☐ ເອກະສານຢັ້ງຢືນການຜ່ານງານ ໃນໄລຍະ 5 (ຫ້າ) ປີ ຜ່ານມາຕໍ່ເນື່ອງກັນຂອງຜູ້ກ່ຽວ;
- ☐ (ສຳລັບຄົນລາວ) ສຳເນົາບັດປະຈຳຕົວ (ສຳເນົາເປັນສີ), ສຳມະໂນຄົວ ແລະ ໃບຢັ້ງຢືນທີ່ຢູ່;
- ☐ (ສຳລັບຄົນຕ່າງປະເທດ) ສຳເນົາໜັງສືຜ່ານແດນ (ສຳເນົາເປັນສີ);
- ☐ (ສຳລັບຄົນລາວ) ໃບແຈ້ງໂທດຕົ້ນສະບັບ;
- ☐ (ສຳລັບຄົນຕ່າງປະເທດ) ໃບແຈ້ງໂທດຕົ້ນສະບັບ ຫຼື ເອກະສານທີ່ຄ້າຍຄືກັນ (ຕົ້ນສະບັບ) ໂດຍມີການຢັ້ງຢືນຈາກອົງການທີ່ມີສິດອຳນາດກ່ຽວຂ້ອງ;
- ☐ ສຳເນົາສັນຍາແຮງງານ ລະຫວ່າງຜູ້ບໍລິຫານ ແລະ ທະນາຄານ (ຖ້າມີ)
- ☐ ໃບລາຍງານຂໍ້ມູນ ປະຫວັດອາຊະຍາກຳ ຫຼື ການກ່ຽວພັນກັບ ອາຊະຍາກອນທັງພາຍໃນ ແລະ ຕ່າງປະເທດ ແລະ ບັນດາຂໍ້ມູນດ້ານລົບທີ່ ອົງການໃດໜຶ່ງພາຍໃນ ແລະ ຕ່າງປະເທດ ໄດ້ຄົ້ນພົບກ່ຽວກັບຜູ້ກ່ຽວ ຕາມແບບພິມທີ່ ທະນາຄານແຫ່ງ ສປປ ລາວ ກຳນົດອອກ;
- ☐ ໜັງສືຍິນຍອມໃຫ້ ທະນາຄານແຫ່ງ ສປປ ລາວ ສາມາດກວດສອບປະຫວັດ ຕາມແບບພິມທີ່ທະນາຄານແຫ່ງ ສປປ ລາວ ກຳນົດອອກ (ເຊັນໂດຍເຈົ້າຂອງປະຫວັດ);
- ☐ ໜັງສືປະຕິຍານຕົນໃນການເຂົ້າຮັບຕຳແໜ່ງ ຕາມແບບພິມທີ່ທະນາຄານແຫ່ງ ສປປ ລາວ ກຳນົດອອກ (ເຊັນໂດຍຜູ້ໄດ້ຮັບການແຕ່ງຕັ້ງ).

II. **ການປົດຕຳແໜ່ງ**

- ☐ ຄຳຮ້ອງສະເໜີຂໍຮັບຮອງການປົດຕຳແໜ່ງ ຕາມແບບພິມທີ່ ທະນາຄານແຫ່ງ ສປປ ລາວ ກຳນົດອອກ;
- ☐ ສຳເນົາມະຕິ ຫຼື ຂໍ້ຕົກລົງປົດຕຳແໜ່ງ ຫຼື ໃຫ້ຢຸດຕິການດຳລົງຕຳແໜ່ງ ພ້ອມດ້ວຍເຫດຜົນ ແລະ ມາດຕະການແກ້ໄຂຕໍ່ການຕົກລົງດັ່ງກ່າວ.

ແບບພິມ ສາມາດດາວໂຫຼດໄດ້ທີ່ www.bol.gov.la